ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຖອດຖອນບົດຮຽນໃນການສະຫຼຸບລາຍງານ ຂຽນຂ່າວພົ້ນເດັ່ນທີ່ເກີດຂຶ້ນໃນພາກພື້ນ ແລະ ສາກົນ



ໃນຕອນເຊົ້າຂອງວັນທີ 26 ສິງຫາ 2022, ທີ່ຫ້ອງປະຊຸມກົມການຂ່າວ, ກະຊວງການຕ່າງປະເທດ ໄດ້ຈັດກອງປະຊຸມຖອດຖອນບົດຮຽນໃນການສະຫຼຸບລາຍງານຂຽນຂ່າວພົ້ນເດັ່ນທີ່ເກີດຂຶ້ນໃນພາກພື້ນ ແລະ ສາກົນ,ໃນຮູບແບບຊ້ອງໜ້າ ໂດຍໃຫ້ກຽດເປັນປະທານ ແລະ ໃຫ້ກຽດບັນຍາຍໂດຍ ທ່ານ ພອນທະວີ ບຸດດາລາ, ຫົວໜ້າກົມການຂ່າວ, ກະຊວງການຕ່າງປະເທດ ແລະ ພາກສ່ວນ ທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍພາຍໃຕ້ການນໍາພາເຂົ້າຮ່ວມໂດຍ ທ່ານ ນ. ມາລີນີ ຊາວັນນາ, ຮອງຫົວໜ້າກົມຮ່ວມມືສາກົນ ທຫລ, ພ້ອມດ້ວຍຄະນະຕາງໜ້າຈາກ ກົມຮ່ວມມືສາກົນ, ກົມຈັດຕັ້ງ ແລະ ພະນັກງານ ແລະ ໜ່ວຍງານຂ່າວສານ, ຫ້ອງການ ທຫລ, ຊຶ່ງມີຜູ້ເຂົ້າຮ່ວມຈາກ 2 ພາກສ່ວນແມ່ນລວມທັງໝົດ 18 ທ່ານ.

ຈຸດປະສົງໃນການເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນໃນຄັ້ງນີ້ແມ່ນເພື່ອ ❶ ຮຽນຮູ້ວິທີການສັງລວມ ແລະ ການຂຽນຂ່າວໃຫ້ໄດ້ເນື້ອໃນຄົບຖ້ວນ ແລະ ກະທັດຮັດ, ລວມທັງການໃຊ້ຄໍາສັບຕ່າງໆໃຫ້ສອດຄ່ອງ ແລະ ຖືກຕ້ອງ; ❷ ຮຽນຮູ້ວິທີການວິເຄາະຂ່າວ, ການໃຫ້ທັດສະນະທີ່ຖືກຕ້ອງຕໍ່ກັບຂ່າວພົ້ນເດັ່ນ ແລະ ❸ ບັນດາແຫຼ່ງຂໍ້ມູນຕ່າງໆ ທີ່ນໍາມາເປັນບ່ອນອີງໃນການຂຽນລາຍງານດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງການບັນຍາຍກ່ຽວກັບ: 1) ການຄົ້ນຄວ້າວິໄຈຂ່າວພົ້ນເດັ່ນພາກພື້ນ ແລະ ສາກົນ, ນໍາສະເໜີໂດຍ ທ່ານ ພອນທະວີ ບຸດດາລາ, ຫົວໜ້າກົມການຂ່າວ, ກະຊວງການຕ່າງ ປະເທດ ແລະ 2) ລົງເລິກພາກປະຕິບັດຕົວຈິງຂອງການຕິດຕາມ, ສັງລວມ ແລະ ຄົ້ນຄວ້າວິໄຈຂ່າວພົ້ນເດັ່ນພາກພື້ນ ແລະ ສາກົນ, ນໍາສະເໜີໂດຍ ທ່ານ ນິລັນດອນ ແກ້ວໂຮດົມ, ຫົວໜ້າພະແນກຄົ້ນຄວ້າວິໄຈຂ່າວ.

ຜ່ານການເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນໃນຄັ້ງນີ້ ເຫັນວ່າ ມີຄວາມສຳຄັນ ແລະ ເປັນປະໂຫຍດຫຼາຍໃຫ້ແກ່ພະນັກງານ ທຫລ ໂດຍສະເພາະດ້ານກົນໄກການເຮັດວຽກພາຍໃນ, ການປະສານງານທີ່ກົມກຽວລະຫວ່າງ ກົມການຂ່າວ ກັບບັນດາກົມພາຍໃນກໍ່ຄື ພາກສ່ວນກ່ຽວຂ້ອງ ແລະ ວິທີການຕິດຕາມ ແລະ ວິໄຈຂ່າວພົ້ນເດັ່ນຕ່າງໆໄດ້ທັນສະພາບ ແລະ ຊັດເຈນ. ນອກນີ້, ຍັງໄດ້ຮຽນຮູ້ ຫຼັກການຂຽນລາຍງານ, ການນຳໃຊ້ພາສາທີ່ມີຄວາມຊັດເຈນ (ພາສາລາວ), ວິທີການວິໄຈຂ່າວ, ການສັງລວມຂ່າວ, ການຂຽນຂ່າວ ຕ່າງໆ ແລະ ແຫຼ່ງຂໍ້ມູນສຳຄັນທີ່ຈຳເປັນ. ຢ່າງໃດກໍ່ດີຜ່ານການຮັບຟັງ ແລະ ແລກປ່ຽນໃນທີ່ປະຊຸມ ໄດ້ເຮັດໃຫ້ຜູ້ເຂົ້າຮ່ວມ ສາມາດຮັບ ສັງລວມ ຕີລາຄາຂ່າວ ແລະ ກຳໄດ້ສະພາບຂ່າວພົ້ນເດັ່ນທີ່ເກີດຂຶ້ນໃນພາກພື້ນ ແລະ ສາກົນ ໄດ້ກວ້າງຂວາງກວ່າເກົ່າ; ແລະ ສາມາດ ໝູນໃຊ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານການຂຽນລາຍງານຂ່າວພົ້ນເດັ່ນຕໍ່ການນຳຂັ້ນເທິງຢ່າງມີເນື້ອໃນຄົບຖ້ວນ, ກະທັດ ຮັດ ແລະ ເລິກເຊິ່ງຂຶ້ນກວ່າເກົ່າ.

**# ຂ່າວ: ກົມຮ່ວມມືສາກົນ, ທຫລ.**

**# ພາບ: ກົມການຂ່າວ, ກະຊວງການຕ່າງປະເທດ.**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**